ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຝຶກອົບຮົມຫຼັກສູດການຄຸ້ມຄອງລັດ ສໍາລັບຜູ້ບໍລິຫານລະດັບສູງ




ໃນລະຫວ່າງວັນທີ **06-10** ພະຈິກ **2023** ນີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບກະຊວງພາຍໃນ ໄດ້ຈັດຝຶກອົບຮົມຫຼັກສູດ “ການຄຸ້ມຄອງລັດສໍາລັບຜູ້ບໍລິຫານລະດັບສູງ” ຂຶ້ນ ຢູ່ທີ່ສະຖາບັນການທະນາຄານ ໂດຍການໃຫ້ກຽດເປັນປະທານຂອງທ່ານ ນິສິດ ແກ້ວປັນຍາ ຮອງລັດຖະມົນຕີກະຊວງພາຍໃນ, ໃຫ້ກຽດເຂົ້າຮ່ວມໂດຍທ່ານ ນ. ໂພທິຈັນ ທໍາມະເທວາ ຫົວໜ້າກົມຈັດຕັ້ງແລະພະນັກງານ, ມີບັນດາຄະນະກົມພາຍໃນ ທຫລ, ສາຂາ ທຫລ ປະຈໍາພາກ ເຂົ້າຮ່ວມຈໍານວນ 21 ທ່ານ.

ຈຸດປະສົງຂອງການຝຶກອົບຮົມຫຼັກສູດໃນຄັ້ງນີ້, ກໍ່ເພື່ອເປັນການຮຽນຮູ້ ແລະ ສ້າງຄວາມເຂົ້າໃຈກ່ຽວກັບການບໍລິຫານໃນລະບົບການເມືອງ, ການນໍາພາ ແລະ ຄຸ້ມຄອງ, ການບໍລິຫານການປ່ຽນແປງເພື່ອຄວາມກ້າວໜ້າ, ການວາງແຜນຍຸດທະສາດ, ການຄຸ້ມຄອງພະນັກງານ-ລັດຖະກອນ, ການປະເມີນ ແລະ ການພັດທະນາພະນັກງານ-ລັດຖະກອນ, ການຄຸ້ມຄອງ ແລະ ການກວດກາງົບປະມານແຫ່ງລັດ, ການກວດກາ, ກວດສອບ ແລະ ການຕ້ານການສໍ້ລາດບັງຫຼວງ.



ການຝຶກອົບຮົມດັ່ງກ່າວ ແມ່ນໄດ້ດຳເນີນເປັນ 5 ວັນເຕັມ, ດ້ວຍບັນຍາກາດອັນຟົດຟື້ນ ຊຶ່ງນັກສຳມະກອນກໍ່ໄດ້ເອົາໃຈໃສ່ຮັບຟັງການອະທິບາຍ, ແລກປ່ຽນຄຳຄິດເຫັນ ເຊິ່ງກັນແລະກັນ, ເຮັດໃຫ້ການຝຶກອົບຮົມໄດ້ປິດລົງດ້ວຍຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.



ຂ່າວ-ພາບ: ສົມພິດ ທຳມະວົງ

ຢູ່ເມືອງລາວ ໃຊ້ເງິນກີບລາວ